1 ກໍລະກົດ, 2025

# ໂຄງການ Individual In-Reach ໃໝ່

ຮຽນຜູ້ພັກອາໄສໃນສະຖານພະຍາບານທີ່ມີທັກສະ,

Health First Colorado (ໂຄງການ Medicaid ຂອງລັດ Colorado) ມີຄວາມຕ້ອງການທີ່ຈະປັບປຸງວິທີການແບ່ງປັນຂໍ້ມູນກ່ຽວກັບຕົວເລືອກຕ່າງໆ ສໍາລັບການດໍາລົງຊີວິດໃນຊຸມຊົນ. ເປົ້າໝາຍຂອງພວກເຮົາແມ່ນເພື່ອໃຫ້ສະມາຊິກ Health First Colorado ທີ່ພັກອາໄສຢູ່ໃນສະຖານພະຍາບານ ຮັບຮູ້ກ່ຽວກັບຕົວເລືອກທັງໝົດ ສໍາລັບການຍ້າຍອອກຈາກສະຖານພະຍາບານ ຖ້າຫາກພວກເຂົາຕ້ອງການ.

ເພື່ອຊ່ວຍໃນເລື່ອງນີ້ ໂຄງການ Individual In-Reach ຈະເລີ່ມຕົ້ນໃນວັນທີ 1 ເດືອນກໍລະກົດ ເຊິ່ງເປັນໂອກາດໃຫ້ທ່ານໄດ້ຮຽນຮູ້ເພີ່ມເຕີມກ່ຽວກັບຕົວເລືອກຕ່າງໆ ສໍາລັບການປ່ຽນຜ່ານສູ່ການດໍາລົງຊີວິດໃນຊຸມຊົນ.

**ຂໍ້ເທັດຈິງບາງປະການກ່ຽວກັບ Individual In-Reach:**

- **ໂຄງການ** Individual In-Reach **ເປັນທາງເລືອກ** - ທ່ານບໍ່ຈໍາເປັນຕ້ອງດໍາເນີນການຫາກບໍ່ຕ້ອງການ.
- ຖ້າທ່ານສົນໃຈທີ່ຈະຍ້າຍອອກຈາກສະຖານພະຍາບານ ທ່ານອາດຈະສາມາດອາໄສຢູ່ໃນສະຖານທີ່ອື່ນໃນຊຸມຊົນ ເຊັ່ນ:
  - ອະພາດເມັນ ຫຼື ເຮືອນຂອງທ່ານເອງ
  - ສະຖານທີ່ດູແລຜູ້ສູງອາຍຸ
  - ສະຖານທີ່ດູແລຜູ້ສູງອາຍຸແບບອິດສະຫຼະ
  - ອາດຈະມີທາງເລືອກອື່ນໆ ອີກເຊັ່ນກັນ
- ພວກເຮົາຂໍແນະນໍາໃຫ້ທ່ານແບ່ງປັນຂໍ້ມູນນີ້ໃຫ້ຜູ້ທີ່ໃຫ້ການສະໜັບສະໜູນທ່ານ
  - ຖ້າທ່ານມີຜູ້ປົກຄອງ ຫຼື ຜູ້ດູແລ ບຸກຄົນນັ້ນຈະຕ້ອງເຂົ້າຮ່ວມໃນຂະບວນການນີ້.
- Individual In-Reach ສາມາດໃຫ້ຂໍ້ມູນສ່ວນບຸກຄົນແກ່ທ່ານ ກ່ຽວກັບສິດປະໂຫຍດ ແລະ ການບໍລິການທີ່ທ່ານອາດມີສິດໄດ້ຮັບ.
- ຂໍແຈ້ງໃຫ້ທ່ານຊາບວ່າ ບໍ່ມີການຮັບປະກັນເຖິງການບໍລິການ ຫຼື ການປ່ຽນແປງໃດໆ.

ທີ່ປຶກສາ In-Reach ຈະເລີ່ມຕິດຕໍ່ສະມາຊິກທີ່ອາໄສຢູ່ໃນສະຖານພະຍາບານໃນເດືອນກໍລະກົດ 2025 ເພື່ອສອບຖາມວ່າພວກເຂົາສົນໃຈທີ່ຈະຮຽນຮູ້ເພີ່ມເຕີມຫຼືບໍ່. ຖ້າຫາກທ່ານຕ້ອງການເລີ່ມຂະບວນການນີ້ໂອຂຶ້ນ, ຂໍໃຫ້ທ່ານກະລຸນາຕື່ມແບບຟອມແນະນໍາທີ່ຢູ່ດ້ານຫຼັງຂອງຈົດໝາຍນີ້ ຫຼື ໃຊ້ລະຫັດ QR ທີ່ຢູ່ດ້ານລຸ່ມເພື່ອຕື່ມແບບຟອມຜ່ານອອນລາຍ. ທີ່ປຶກສາ In-Reach ຈະຕິດຕໍ່ຫາທ່ານພາຍໃນ 10 ວັນລັດຖະການ.

ສໍາລັບຂໍ້ມູນເພີ່ມເຕີມ ກະລຸນາໄປທີ່ເວັບໄຊ HealthFirstColorado.com/transition-services.

ດ້ວຍຄວາມນັບຖື,

ທີມ In-Reach

ໂທ: 303-866-5499

ອີເມວ: hcpf_clo_inreach@state.co.us

## ແບບຟອມຄຳຮ້ອງຂໍການປ່ຽນຜ່ານ Medicaid ໄປສູ່ຊຸມຊົນ

hcpf.jotformgov.com/241226870607052

ຕື່ມແບບຟອມນີ້ໃຫ້ສຳເລັດເພື່ອຕິດຕໍ່ກັບບຸກຄົນທີ່ສາມາດໃຫ້ຂໍ້ມູນກ່ຽວກັບຂະບວນການປ່ຽນຜ່ານເຂົ້າສູ່ການດຳລົງຊີວິດໃນຊຸມຊົນ.

ຜູ້ອາໄສ, ຜູ້ປົກຄອງ, ຜູ້ມອບອຳນາດ ຫຼື ບຸກຄົນໃດໆ ທີ່ອາໄສຢູ່ໃນຊຸມຊົນ

## ເວັບໄຊທ໌ບໍລິການການປ່ຽນຜ່ານ

hfcgo.com/transition-services

ຂໍ້ມູນກ່ຽວກັບຂະບວນການຍ້າຍເຂົ້າສູ່ຊຸມຊົນ ແລະ ຊັບພະຍາກອນອື່ນໆ ທີ່ອາດໃຊ້ໄດ້.